ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ອຸດົມໄຊ, ວັນທີ 28/2/2013

# ບົດລາຍງານ

## ການລົງເຄື່ອນໄຫວບໍລິການກວດ ແລະ ປິ່ນປົວພະຍາດ ຫູ-ດັງ-ຄໍ, ແຂ້ວ, ຕາ, ແມ່ມານ ແລະ ເດັກນ້ອຍ

ທີ່ ເມືອງຮຸນ ແລະ ເມືອງປາກແບງ ແຂວງອຸດົມໄຊ

ຄັ້ງວັນທີ 18-22 ກຸມພາ 2013

ສະໜັບສະໜູນໂດຍ: ມູນນິທິຟື້ນຟູສຸຂະພາບລາວ

Lao Rehabilitation Foundation, Inc. USA

# ບົດຂັດຫຍໍ້:

**ຊື່ກິດຈະກຳ:** "ການລົງເຄື່ອນໄຫວບໍລິການກວດ ແລະ ປິ່ນປົວ ພະຍາດຫູ-ດັງ-ຄໍ, ແຂ້ວ, ຕາ, ກວດແມ່ມານ ແລະ ເດັກນ້ອຍ ຢູ່ເຂດຊົນນະບົດ ທີ່ເມືອງຮຸນ ແລະ ເມືອງປາກແບງ ແຂວງອຸດົມໄຊ".

**ຜູ້ໃຫ້ທຶນສະໜັບສະໜູນ:** ມູນນິທິ ຟື້ນຟູສຸຂະພາບລາວ

**ງົບປະມານ ແລະ ລາຍຈ່າຍ ທັງໝົດ:** 33, 385 USD

- ມູນນິທິ ຟື້ນຟູສຸຂະພາບລາວ 86%: 28,668 USD
- ມູນນິທິ ເຟຼດໂຮໂລ 14%: 4,717 USD

**ຜູ້ຮ່ວມງານ:** ພະແນກສາທາລະນະສຸກແຂວງ, ໂຮງໝໍແຂວງອຸດົມໄຊ ແລະ ໜ່ວຍງານຕາ.

**ຜູ້ຈັດຕັ້ງປຕິບັດ:** ທີມງານແພດຈາກໂຮງໝໍແຂວງອຸດົມໄຊ, ທ່ານໝໍຫູ-ດັງ-ຄໍ ຈາກ ໂຮງໝໍມິດຕະພາບ ແລະ ວິຊາການຈາກໂຮງໝໍທ້ອງຖິ່ນ.

**ເວລາ ແລະ ສະຖານທີ່ບໍລິການ:** ໃຊ້ເວລາທັງໝົດ 5 ວັນ ໃນ 2 ເມືອງ:

ເມືອງຮຸນ ແຂວງອຸດົມໄຊ: ວັນທີ 18-20/2/2013

ເມືອງປາກແບງ ແຂວງອຸດົມໄຊ: ວັນທີ 21-22/2/2013

**ຈຸດປະສົງ:**

- ເພື່ອຫຼຸດຜ່ອນຈຳນວນຄົນຕາບອດ, ຫູໜວກ, ແຂ້ວແມງ, ອັດຕາການຕາຍຂອງແມ່ ແລະ ເດັກ ໃຫ້ຫຼຸດນ້ອຍລົງ. ເຮັດໃຫ້ວຽກງານການບໍລິການສາທາລະນະສຸກໃຫ້ໄປທົ່ວເຖິງ ບ່ອນຫ່າງໄກ ສອກຫຼີກ.
- ພ້ອມກັບຊ່ວຍພັດທະນາການບໍລິການສາທາລະນະສຸກຢູ່ຂັ້ນເມືອງ ໃຫ້ມີຄຸນນະພາບ ດີຂຶ້ນທາງດານວິຊາການ ແລະ ເຄື່ອງມືອຸປະກອນ.

**ກິດຈະກຳ ແລະ ວິທີຈັດຕັ້ງປະຕິບັດ:**

ການລົງເຄື່ອນໄຫວບໍລິການກວດ ແລະ ປິ່ນປົວພະຍາດໃນຄັ້ງນີ້ ມີ 5 ກິດຈະກຳຄື: ບໍລິການ ກວດ ແລະ ປິ່ນປົວ ພະຍາດ: ຫູ-ດັງ-ຄໍ, ແຂ້ວ, ຕາ, ກວດ ແມ່ມານ ແລະ ເດັກນ້ອຍ ຊຶ່ງທຸກໜ່ວຍງານປະກອບມີແພດຊ່ຽວຊານ ແລະ ແພດຊ່ວຍ ໂດຍນຳໃຊ້ເຄື່ອງມືອຸປະກອນ ການແພດພື້ນຖານ ແລະ ທັນສະໄໝ ໃນການກວດ, ບົ່ງມະຕິ ພ້ອມປິ່ນປົວ ດ້ວຍຢາທີ່ມີຄຸນນະພາບ ແລະ ຖືກຕ້ອງຕາມມາດຕະຖານໃນການປິ່ນປົວ.

**ຜົນໄດ້ຮັບ:**

ຈຳນວນຄົນເຈັບທີ່ໄດ້ຮັບການກວດ ແລະ ປິ່ນປົວທັງໝົດຢູ່ 2 ໂຮງໝໍເມືອງ ແລະ 2 ໂຮງຮຽນ ແມ່ນ 2,259 ຄົນ (ຍິງ: 1,186) ໃນນັ້ນປະກອບມີ: ກວດ ແລະ ປິ່ນປົວພະຍາດ ຫູ-ດັງ-ຄໍ: 369 ຄົນ (ຍິງ

183), ແຂ້ວ 414 ຄົນ (ຍິງ 257), ຕາ 465 ຄົນ (ຍິງ 219) (ໄດ້ຜ່າຕັດແກ່ນຕາຂຸ້ນ 76 ກໍລະນີ), ໄດ້ກວດແມ່ມານດ້ວຍເຄື່ອງມື Ultrasound 105 ຄົນ (5 ຄົນແມ່ນມີອາການສົນລູກໃນທ້ອງ) ກວດ ແລະ ປິ່ນປົວພະຍາດເດັກນ້ອຍ 407 ຄົນ (ຍິງ 231), ກວດເດັກນັກຮຽນປະຖົມ 393 ຄົນ (ຍິງ 182).

**<u>ສະຫຼຸບ:</u>** ການລົງເຄື່ອນໄຫວໃນຄັ້ງນີ້ ແມ່ນມີຄວາມສຳຄັນ ທີ່ໄດ້ຊ່ວຍປິ່ນປົວ ແລະ ປ້ອງກັນ ພະຍາດ, ຊຶ່ງພະຍາດສ່ວນຫຼາຍ ແມ່ນສາມາດປິ່ນປົວ ແລະ ປ້ອງກັນໄດ້, ຄວາມຕ້ອງການກວດ ແລະ ປິ່ນປົວ ແມ່ນຍັງສູງ ແລະ ຈຳນວນຄົນເຈັບທີ່ເປັນ ພະຍາດຕາບອດ,ຫູໜວກ, ແຂ້ວແມງ, ພະຍາດອັກເສບໃນເດັກ ແລະ ບັນຫາຂອງແມ່ມານ ຢູ່ເຂດຊົນນະບົດ ຍັງຈະເພີ່ມຂື້ນສູງ ຖ້າຍັງຂາດທີມງານໃຫ້ການບໍລິການເຄື່ອນທີ່.

# **ສາລະບານ**


| ຫົວຂໍ້ | ໜ້າ |
|---|---|
| ບົດຂັດຫຍໍ້ ........................................................................................ | 2 |
| ພາກສະເໜີ | |
| 1. ຄວາມເປັນມາຂອງກິດຈະກຳ (ເຫດຜົນ ແລະ ຄຳແນະນຳທົ່ວໄປ) .................... | 5 |
| 2. ຊື່ກິດຈະກຳ ........................................................................ | 6 |
| 3. ຈຸດປະສົງ .......................................................................... | 6 |
| 4. ເປົ້າໝາຍ .......................................................................... | 6 |
| 5. ທີ່ຕັ້ງ ແລະ ໄລະຍະເວລາ ກິດຈະກຳ ................................................ | 7 |
| 6. ອົງການທີ່ໃຫ້ທຶນ, ອົງການຈັດຕັ້ງປະຕິບັດ ແລະ ເພື່ອນຮ່ວມງານ ...................... | 7 |
| ວິທີຈັດຕັ້ງປະຕິບັດ (ໄລຍະກະກຽມ ແລະ ດຳເນີນກິດຈະກຳ) ....................................... | 9 |
| ຜົນສຳເລັດຂອງການຈັດຕັ້ງປະຕິບັດ ........................................................... | 12 |
| ງົບປະມານທີ່ໃຊ້ຈ່າຍ ..................................................................... | 15 |
| ຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ແນວທາງແກ້ໄຂ ........................................... | 16 |
| ແຜນກິດຈະກຳໃນ ເດືອນ ຕຸລາ 2013 ....................................................... | 17 |
| ເອກະສານຂັດທ້າຍ ....................................................................... | 18 |
| 1. ຮູບພາບກິດຈະກຳ | |
| 2. ທີມງານ | |
| 3. ລາຍລະອຽດການໃຊ້ຈ່າຍງົບປະມານຂອງໂຄງການ | |
| 4. ລາຍການເຄື່ອງມືອຸປະກອນການແພດ ທີ່ໄດ້ບໍລິຈາກໃຫ້ແກ່ 2 ໂຮງໝໍເມືອງ | |
| 5. ລາຍການໃບຮັບຮອງ ແລະ ໃບຍ້ອງຍໍຈາກ 2 ໂຮງໝໍເມືອງ | |
| 6. ເອກະສານ ໃບສະເໜີ ແລະ ມະຕິຕົກລົງ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ | |

# ພາກທີ່ I

# ພາກສະເໜີ

## I. ສະພາບລວມຂອງກິດຈະກຳ

### 1. ຄວາມເປັນມາຂອງກິດຈະກຳ (ເຫດຜົນ ແລະ ຄຳແນະນຳທົ່ວໄປ)

ການດູແລະຮັກສາສຸຂະພາບ ຢູ່ເຂດຊົນນະບົດ ຍັງເປັນບັນຫາສຳຄັນຢ່າງໜຶ່ງ ຂອງກະຊວງສາທາ ແລະ ພະແນກສາທາລະນະສຸກ ໂດຍສະເພາະການດູແລຮັກສາສຸຂະພາບ ຫູ-ດັງ-ຄໍ, ແຂ້ວ, ຕາ, ແມ່ມານ ແລະ ເດັກນ້ອຍ. ຄວາມຈິງແລ້ວ ຍັງມີຄົນເຈັບຢ່າງຫຼວງຫຼາຍ ທີ່ຍັງບໍ່ໄດ້ຮັບການກວດ ແລະ ປິ່ນປົວພະຍາດ ຢູ່ເຂດຊົນ ນະບົດ ບ່ອນຫ່າງໄກສອກຫຼີກ ເນື່ອງຈາກວ່າ:

- ງົບປະມານຂອງລັດຖະບານລາວ ຍັງບໍ່ທັນພຽງພໍຕາມຄວາມຕ້ອງການ ຂອງວຽກງານສົ່ງເສີມວິຊາການລົງກວດ ແລະ ບໍລິການຄົນເຈັບ ຫູ-ດັງ-ຄໍ, ແຂ້ວ, ຕາ, ແມ່ມານ ແລະ ເດັກນ້ອຍ ຢູ່ເຂດຊົນນະບົດ.
- ລະດັບການບໍລິການປິ່ນປົວ ຢູ່ຂັ້ນໂຮງໝໍເມືອງ ຍັງຂາດແຄນທັງບຸກຄະລາກອນ ແລະ ຂາດເຄື່ອງເມືອງອຸປະກອນການແພດ ໃນການກວດ ແລະ ບົງມະຕິພະຍາດ.
- ບ້ານຢູ່ຫ່າງໄກສອກຫຼີກຈາກໂຮງໝໍແຂວງ ພົບຂໍ້ຫຍຸ້ງຍາກ ໃນການຄົມມະນາຄົມ.
- ຄົນເຈັບສ່ວນຫຼາຍ ແມ່ນທຸກຍາກບໍ່ສາມາດໃຊ້ຈ່າຍ ໃນການທີ່ຈະມາເຖິງໂຮງໝໍແຂວງ.
- ຄວາມຮັບຮູ້ດ້ານການຮັກສາສຸຂະພາບຂັ້ນຕົ້ນ ກ່ຽວກັບແຂ້ວ, ຫູ-ດັງ-ຄໍ, ຕາ ແມ່ນຍັງຕ່ຳ.
- ປະຊາຊົນສ່ວນໜຶ່ງຍັງເຊື່ອຖືປິ່ນປົວພະຍາດ ແບບງົມງວຍ.

ການດູແລຮັກສາສຸຂະພາບ ໃຫ້ແກ່ແມ່ມານ ແລະ ເດັກນ້ອຍ ຍັງເປັນວຽກງານບູລິມະນສິດ ຂອງກະຊວງສາທາລະນະສຸກ ແລະ ພະແນກສາທາລະນະສຸກຂັ້ນແຂວງ ແຕ່ຍັງພົບຂໍ້ຫຍຸ້ງຍາກ ຢູ່ຂັ້ນເມືອງ ການບໍລິການ ແມ່ມານ ແລະ ເດັກ ສ່ວນໃຫຍ່ ແມ່ນເນັ້ນໃສ່ ວຽກງານສັກຢາ, ແຈກຢາຍຢາວິດຕາມິນອາ ແລະ ຢາຂ້າແມ່ທ້ອງ.

ເມືອງຮຸນ ແລະ ເມືອງປາກແບງ ເປັນ 2 ເມືອງໃຕ້ຂອງແຂວງອຸດົມໄຊ ໃນ 2 ເມືອງນີ້ ຍັງຂາດແຄນທາງທາງດ້ານວິຊາການ ແລະ ເຄື່ອງມືອຸປະກອນການແພດ ໃນການບໍລິການກວດ ແລະ ປິ່ນປົວ ພະຍາດຫູ-ດັງ-ຄໍ, ແຂ້ວ, ຕາ, ແມ່ມານ ແລະ ເດັກນ້ອຍ. ສະເພາະເມືອງປາກແບງ ໄດ້ມີ International Clinic ທີ່ມີອາສາສະໝັກ ແລະ ທຶນສະໜັບສະໜູນຈາກ ຕ່າງປະເທດ ທີ່ໃຫ້ບໍລິການແກ້ໄຂແກ່ຄົນເຈັບ ໃນໄລຍະຜ່ານມາ, ເຖິງຢ່າງໃດກໍ່ຕາມ ໃນການກວດ ແລະ ການປິ່ນປົວ ພະຍາດ ຍັງບໍ່ທັນພຽງພໍ ຕາມຄວາມຕ້ອງການ.

ໃນໄລຍະຜ່ານມາ ເລີ່ມແຕ່ປີ 2008 ຈາກການຮ່ວມມືລະຫວ່າງ ທີມງານໂຮງໝໍແຂວງອຸດົມໄຊ ແລະ ມູນນິທິຟື້ນຟູສຸຂະພາບລາວ, ທາງດ້ານຊ່ຽວຊານ ວິຊາການທີ່ມີຄວາມຮູ້ຄວາມສຳນານງານ ໄດ້ດຳເນີນການເຄື່ອນໄຫວ ບໍລິການກວດ ແລະ ປິ່ນປົວ ພະຍາດຫູ-ດັງ-ຄໍ, ແຂ້ວ ແລະ ຕາ ຢູ່ເຂດຊົນນະບົດ ເຂດໂຮງໝໍເມືອງ ພາຍໃນ 4 ແຂວງພາກເໜືອ: ອຸດົມໄຊ, ຫຼວງນ້ຳທາ,ບໍ່ແກ້ວ ແລະ ຜົ້ງສາລີ , ສະເພາະແຂວງອຸດົມໄຊ ແມ່ນໄດ້ດຳເນີນມາເປັນຄັ້ງທີ່ 8 ໄດ້ທົ່ວເຖິງ ທຸກເມືອງຂອງແຂວງອຸດົມໄຊ, ຊຶ່ງຜົນຂອງການລົງເຄື່ອນໄຫວໃນໄລຍະຜ່ານມາ ແມ່ນໄດ້ຮັບຜົນສູງ ໃຫ້ບໍລິການຄົນເຈັບທັງໝົດ ຫຼາຍກວ່າ 25,500 ຄົນ ທີ່ບໍ່ເສຍຄ່າບໍລິການກວດ ແລະ ປິ່ນປົວ. ນອກນີ້ ທາງມູນນິທິຍັງໄດ້ສ້າງຄວາມຍືນຍົງ ໃຫ້ແກ່ບັນດາ ໂຮງໝໍເມືອງໃນ 4 ແຂວງພາກເໜືອ ໂດຍການຝຶກ ອົບຮົມກັບທີ່ ໃຫ້ແກ່ພະນັກງານທ້ອງຖິ່ນ ພ້ອມສະໜອງເຄື່ອງມືອຸປະກອນການແພດທີ່ຈຳເປັນ ເພື່ອ ສ້າງຜົນປະໂຫຍດ ໃນການບໍລິການຄົນເຈັບ ໃນໂຮງໝໍໃຫ້ດີຂຶ້ນເທື່ອລະກ້າວ.

ໃນການລົງເຄື່ອນໄຫວໃນຄັ້ງນີ້ ແມ່ນມີຄວາມສຳຄັນ ແລະ ຈຳເປັນ ທີ່ໄດ້ສືບຕໍ່ການປິ່ນປົວພະຍາດ ແລະຊ່ວຍປ້ອງກັນ ເພື່ອຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກໃຫ້ຫຼຸດລົງ ຢູ່ເຂດຊົນນະບົດ, ໂດຍການປະສານງານຈາກ ໂຮງໝໍແຂວງອຸດົມໄຊ ກັບ ມູນນິທິຟື້ນຟູສຸຂະພາບລາວ (LRF) ແລະ ມູນນິທິ ເຟຼດໂຮໂລ (FHF).

## II. ຊື່ກິດຈະກຳ

"ການລົງເຄື່ອນໄຫວບໍລິການກວດ ແລະ ປິ່ນປົວ ພະຍາດຫູ-ດັງ-ຄໍ, ແຂ້ວ, ຕາ, ກວດແມ່ມານ ແລະ ເດັກນ້ອຍ ຢູ່ເຂດຊົນນະບົດ ທີ່ເມືອງຮຸນ ແລະ ເມືອງປາກແບງ ແຂວງອຸດົມໄຊ".

## III. ຈຸດປະສົງ

- ເພື່ອຫຼຸດຜ່ອນອັດຕາແຜ່ກະຈາຍຂອງພະຍາດຫູໜວກ, ແຂ້ວແມງ, ຕາບອດ ແລະ ອັດຕາການຕາຍຂອງແມ່ ແລະ ເດັກ.
- ເຮັດໃຫ້ການບໍລິການຮັກສາສຸຂະພາບໃຫ້ທົ່ວເຖິງ ໃນຂອບເຂດຊົນນະບົດບ່ອນຫ່າງໄກສອກຫຼີກ.
- ເພື່ອພັດທະນາບຸກຄະລາກອນ ໂດຍສະເພາະທ່ານໝໍລາວ ແລະ ພະນັກງານທ້ອງຖິ່ນ ທີ່ໄດ້ຮໍ່າຮຽນ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດກວດ ແລະ ປິ່ນປົວພະຍາດຢູ່ເຂດຊົນນະບົດ, ພ້ອມສະໜອງເຄື່ອງມືອຸປະກອນການແພດທີ່ຈຳເປັນ ໃຫ້ແກ່ໂຮງໝໍຂັ້ນເມືອງ.

## IV. ເປົ້າໝາຍ

ໃຫ້ການບໍລິການກວດ ແລະ ປິ່ນປົວ ພະຍາດ ຫູ-ດັງ-ຄໍ, ແຂ້ວ, ຕາ, ຜູ້ໃຫຍ່ທົ່ວໄປ, ກວດ ແມ່ມານ ແລະ ເດັກນ້ອຍ ໂດຍບໍ່ໄດ້ຈຳແນກເພດ, ອາຍຸ, ເຜົ່າ, ສາດສະໜາ ໃຫ້ໄດ້: 2,390 ກໍລະນີ ໃນ 2 ເມືອງເປົ້າໝາຍ ໂດຍບໍ່ໄດ້ເສຍຄ່າບໍລິການ.

## V. ໄລຍະເວລາ ແລະ ທີ່ຕັ້ງກິດຈະກໍາ

ໄດ້ບໍລິການເປັນເວລາ 5 ວັນ (18 -22 ກຸມພາ 2013) ທີ່ ໂຮງໝໍ 2 ເມືອງ:

- 18-20 ກຸມພາ 2013 ທີ່ເມືອງຮຸນ
- 21-22 ກຸມພາ 2013 ທີ່ເມືອງປາກແບງ

## VI. ອົງການທີ່ໃຫ້ທຶນ, ໜ່ວຍງານຈັດຕັ້ງປະຕິບັດ ແລະ ເພື່ອນຮ່ວມງານ

### 1. ອົງການທີ່ໃຫ້ທຶນ

- ມູນນິທິ ຟື້ນຟູສຸຂະພາບລາວ
- ຮັບທຶນສົມທົບຈາກ ມູນນິທິ Fred Hollows ສະເພາະວຽກງານກວດ ແລະ ປິ່ນປົວຕາ.

### ມູນນິທິ ຟື້ນຟູສຸຂະພາບ (Lao Rehabilitation Foundation)

ມູນນິທິຟື້ນຟູສຸຂະພາບ ມີສໍານັກງານໃຫຍ່ຕັ້ງຢູ່ California, USA ເປັນອົງການຈັດຕັ້ງໜຶ່ງ ທີ່ບໍ່ຫວັງຜົນກໍາໄລ, ບໍ່ຂຶ້ນກັບສາດສະໜາດ ແລະ ບໍ່ແມ່ນອົງການຈັດຕັ້ງການເມືອງ, ກິດຈະກໍາດໍາເນີນງານທັງໝົດແມ່ນທ່ານ Dr. Luc Janssens ເປັນປະທານ, ມູນນິທິ Lao Rehabilitation ຍັງມີສໍານັກງານຕັ້ງຢູ່ນະຄອນຫຼວງວຽງຈັນ ທີ່ຕຶກອາຄານພະແນກ ສາທາລະນະສຸກ ນະຄອນຫຼວງວຽງຈັນ, ສປປລາວ. ມີຈຸດມຸ້ງໝາຍຊ່ວຍເຫຼືອຟື້ນຟູສຸຂະພາບ ຄົນລາວ, ໂດຍສະເພາະເນັ້ນໃສ່ຟື້ນຟູສຸຂະພາບເດັກນ້ອຍ, ຊ່ວຍເຫຼືອເຊີດຊູສຸຂະພາບໂດຍການສະໜອງອາຫານໃຫ້ພຽງພໍ, ສຸຂະອະນາໄມ, ໄດ້ໃຫ້ການສະໜອງຢາປົວພະຍາດ, ການຝຶກອົບຮົມກໍ່ສ້າງບຸກຄະລາກອນ, ແລະ ການສຸຂະສຶກສາ ລວມທັງວຽກສົ່ງເສີມສາມັນສຶກສາ, ໄດ້ດໍາເນີນຫຼາຍກິດຈະກໍາໃນເຂດຊົນນະບົດບ່ອນຫ່າງໄກສອກຫຼີກ ຊ່ວຍເຫຼືອບໍລິການກວດ ແລະ ປິ່ນປົວພະຍາດໃຫ້ແກ່ຜູ້ທຸກຍາກ ທາງມູນນິທິຍັງໄດ້ ໃຫ້ການຊ່ວຍເຫຼືອຢາ, ອຸປະກອນເຄື່ອງມືໃຫ້ແກ່ໜ່ວຍງານ ຫູ-ດັງ-ຄໍ, ແຂ້ວ ແລະ ຕາ ໃນການລົງບໍລິການເຄື່ອນທີ່. ມູນນິທິ ຟື້ນຟູສຸຂະພາບລາວ (LRF) ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ນໍາຫ້ອງການສະພາວິທະຍາສາດແຫ່ງຊາດ ຫ້ອງວ່າການລັດຖະບານລາວ ໃນເດືອນ ມິຖຸນາ 2011.

### ມູນນິທິ ເຟຼດໂຮໂລ (Fred Hollows Foundation)

ເປັນອົງກອນພັດທະນາ ໃນປະເທດອົດສະຕາລີ ແລະ ສາກົນ, ມີສໍານັກງານໃຫຍ່ຕັ້ງຢູ່ Sydney, Australia. ເປົ້າໝາຍຫຼັກ ຂອງມູນນິທິ ແມ່ນເລັ່ງໃສ່ວຽກງານປ້ອງກັນຕາບອດ ແລະ ສຸຂະພາບຂອງຊຸມຊົນ, ໂດຍໃຫ້ທຶນ ສະໜັບສະໜູນ ແລະ ດໍາເນີນວຽກງານ ຮັກສາສຸຂະພາບຕາຢູ່ 4 ແຂວງພາກເໜືອຂອງລາວ (ຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ ແລະ ບໍ່ແກ້ວ) ຊຶ່ງຜ່ານການເຊັນສັນຍາບົດບັນທຶກຊ່ວຍຈໍາ ຄັ້ງວັນທີ 15 ກັນຍາ, 2008 ລະຫວ່າງ ກົມປິ່ນປົວ ກະຊວງສາທາລະນະສຸກ ແລະ ມູນນິທິ Fred Hollows, ເລີ່ມດໍາເນີນວຽກງານເປີດກ້ວາງຮັກສາສຸຂະພາບຕາຢູ່ 4 ແຂວງພາກເໜືອ ເປັນເວລາ 3 ປີ, ຈົນເຖິງ

ເດືອນ ສິງຫາ 2011, ແລະ ໄດ້ຮັບຮອງການຕໍ່ເວລາໂຄງການໄປອີກ ເປັນເວລາ 2 ປີ ( 2011-2013) ເຊິ່ງປະກອບມີ 5 ແຜນເປົ້າໝາຍຄື: ວຽກງານຄົ້ນຄ້ວາ, ວຽກງານພັດທະນາພື້ນຖານໂຄງລ່າງ, ວຽກງານພັດທະນາບຸກຄະລາກອນ, ວຽກງານຄວບຄຸມ ພະຍາດ ແລະ ວຽກງານສົ່ງເສີມການສະໜັບ ສະໜູນຄູ່ຮ່ວມງານ.

## 2. <u>ໜ່ວຍງານຈັດຕັ້ງປະຕິບັດ</u>

ທີມງານທັງໝົດ 25 ທ່ານ ໃນນັ້ນປະກອບມີ:

### 2.1 ທີມງານລາວ (22 ທ່ານ):

**ຈາກໂຮງໝໍແຂວງອຸດົມໄຊ (12):**

- ຊ່ຽວຊານຕາ 01
- ທ່ານໝໍແຂ້ວ 02
- ຊ່ຽວຊານເດັກ 01
- ພະຍາບານຕາ 03
- ພະຍາບານຊ່ວຍ 05

**ຈາກໂຮງໝໍແຂວງຫຼວງພະບາງ (1):**

- ຊ່ຽວຊານຕາ 01

**ຈາກໂຮງໝໍມິດຕະພາບ 150 ຕຽງ ນະຄອນຫຼວງວຽງຈັນ (1):**

- ຊ່ຽວຊານຫູ-ດັງ-ຄໍ 01

**ທີມງານຈາກໂຮງໝໍເມືອງທ້ອງຖິ່ນ (8):**

- ທ່ານໝໍທົ່ວໄປ 01
- ພະຍາບານຊ່ວຍ 07

### 2.2 ທີມງານຈາກ USA (2)

- ປະທານມູນນິທິ ຟື້ນຟູສຸຂະພາບລາວ 01
- ຜູ້ປະສານງານ 01

### 2.3 ທີມງານຂອງມູນນິທິ Fred Hollows (1):

- ຜູ້ຕິດຕາມໂຄງການ 01

## 3 <u>ເພື່ອນຮ່ວມງານ</u>

- ພະແນກສາທາລະນະສຸກ ແຂວງອຸດົມໄຊ, ໂຮງໝໍແຂວງ ແລະ ໜ່ວຍງານຕາ

# ພາກທີ່ II

# ວິທີການຈັດຕັ້ງປະຕິບັດ

## I. ໄລຍະກະກຽມ

- ໄດ້ປະສານງານກັບໂຮງໝໍແຂວງ ແລະ ໂຮງໝໍເມືອງ, ທີ່ແຂວງອຸດົມໄຊ.
- ໄດ້ຂຽນແຜນສະເໜີ ຈຸດປະສົງ ແລະ ແຜນກິດຈະກຳ ໂດຍຜ່ານການຮັບຮອງຈາກ ພະແນກສາທາລະນະສຸກແຂວງອຸດົມໄຊ.
- ໄດ້ກະກຽມຄົນເຈັບ ໂດຍການແຈ້ງການ ເຖິງເມືອງ, ເຖິງບ້ານ ໂດຍພາກສ່ວນຮັບຜິດຊອບຂັ້ນແຂວງ.
- ໄດ້ກະກຽມເຄື່ອງມືອຸປະກອນ, ຢາ, ງົບປະມານ ແລະ ທີມງານ.

## II. ໄລຍະດຳເນີນງານ

ໄດ້ລົງເຄື່ອນໄຫວ ບໍລິການກວດ ແລະ ປິ່ນປົວພະຍາດ ຢູ່ 2 ເມືອງ ຄື: ເມືອງຮຸນ ແລະ ເມືອງປາກແບງ ແຂວງອຸດົມໄຊ. ໂດຍສົມທົບກັບພະນັກງານຂັ້ນເມືອງເປັນຜູ້ກະກຽມລົງທະບຽນຄົນເຈັບ, ທີມງານວິຊາການໄດ້ດຳເນີນການກວດ, ບົ່ງມະຕິພະຍາດ ໂດຍໃຊ້ອຸປະກອນເຄື່ອງມືອັນພື້ນຖານ ແລະ ທັນສະໄໝ, ຊຶ່ງຄົນເຈັບທຸກຄົນ ແມ່ນໄດ້ຮັບການກວດ ແລະ ປິ່ນປົວ ເທົ່າທຽມກັນ ໂດຍບໍ່ໄດ້ຈຳແນກເພດ, ຊົນເຜົ່າ, ສາດສະໜາ. ປະກອບມີ 5 ໜ່ວຍງານບໍລິການ ຄື:

1. **<u>ບໍລິການກວດ ແລະ ປິ່ນປົວພະຍາດ ຫູ-ດັງ-ຄໍ:</u>**

   ທີມງານຂອງຫູ-ດັງ-ຄໍ ( 1 ທ່ານໝໍຫູ-ດັງ-ຄໍ ຈາກໂຮງໝໍມິດຕະພາບ 150 ຕຽງ ແລະ 1 ພະຍາບານຊ່ວຍ), ໄດ້ບໍລິການ:

   - ກວດວັດແທກການໄດ້ຍິນຂອງຫູ
   - ກວດ ແລະ ປິ່ນປົວກັບທີ່ ອັກເສບຫູກາງ
   - ຂັວດຂີ້ຫູ ແລະ ເສດວັດຖຸນອກກາຍເຂົ້າຫູ
   - ກວດ ແລະ ປິ່ນປົວອັກເສບດັງ ແລະ ຄໍ

2. **<u>ການບໍລິການກວດ ແລະ ປິ່ນປົວພະຍາດ ແຂ້ວ:</u>**

   ທີມງານຂອງແຂ້ວ (2 ທ່ານໝໍແຂ້ວ ຈາກອຸດົມໄຊ ຮ່ວມກັບ 3 ພະຍາບານຊ່ວຍ), ໄດ້ບໍລິການ:

   - ຖອນແຂ້ວ
   - ປິ່ນປົວແຂ້ວແມງ
   - ອັດແຂ້ວແມງ
   - ຂູດຫີນປູນ
   - ໃຫ້ການສຸຂະສຶກສາອະນາໄມແຂ້ວ ແລະ ວິທີຖູແຂ້ວ

3. <u>ການບໍລິການກວດ ແລະ ປິ່ນປົວພະຍາດຕາ:</u>

ທີມງານ (1 ທ່ານໝໍຕາຈາກອຸດົມໄຊ, 1 ທ່ານໝໍຕາ ຈາກຫຼວງພະບາງ ແລະ 3 ພະຍາບານຕາ) ໄດ້ບໍລິການ:

- ວັດແທກສາຍຕາ ເພື່ອຈຳແນກກຸ່ມສາຍຕາດີ, ຕາມົວ ແລະ ຕາບອດ.
- ກວດ ແລະ ປິ່ນປົວບາງພະຍາດຕາດ້ວຍຢາ
- ຜ່າຕັດແກ່ນຕາຂຸ້ນ ແລະ ໃສ່ແກ່ນຕາທຽມ
- ຜ່າຕັດພະຍາດທີ່ເປັນສາຍເຫດພາໃຫ້ຕາບອດ (ຂົນຕາມ້ຳ, ຊີ້ນຕາປີ່ງ, ຕາກະດັນ ແລະ ອື່ນໆ...).
- ບໍລິການວັດແທກແວ່ນຕາ ແລະ ແຈກແວ່ນຕາໃຫ້ແກ່ກຸ່ມຄົນເຈັບສາຍຕາສັ້ນ ແລະ ສາຍຕາຍາວ.

4. <u>ການບໍລິການກວດ ແລະ ປິ່ນປົວແມ່ມານ:</u>

ທີມງານ (1 ທ່ານໝໍ ຈາກອຸດົມໄຊ, 1 ທ່ານໝໍທ້ອງຖິ່ນ ແລະ 1 ພະຍາບານຊ່ວຍ), ໄດ້ບໍລິການ:

- ດຳເນີນການກວດສຸຂະພາບທົ່ວໄປ ໃຫ້ແມ່ມານ
- ກວດເບິ່ງເດັກໃນທ້ອງ ທ່າຂອງເດັກ, ຈັງວະເຕັ້ນຂອງຫົວໃຈ, ການວິວັດທະນາການ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງເດັກໃນທ້ອງ ດ້ວຍເຄື່ອງມື: Echography
- ໃຫ້ການສຸຂະສຶກສາ ແລະ ໃຫ້ການແນະນຳການຝາກທ້ອງ.

5. <u>ການບໍລິການກວດ ແລະ ປິ່ນປົວ ເດັກ:</u>

ທີມງານ (1 ທ່ານໝໍເດັກຈາກ ອຸດົມໄຊ ແລະ 1 ພະຍາບານຊ່ວຍ) ໄດ້ບໍລິການ:

- ກວດເບິ່ງການເຕີບໃຫຍ່ຂະຫຍາຍຕົວຂອງເດັກ: ວັດແທກນ້ຳໜັກ, ລວງສູງ.
- ກວດ ແລະ ປິ່ນປົວພະຍາດທົ່ວໄປ
- ໃຫ້ການສຸຂະສຶກສາ

6. <u>ລົງກວດສຸຂະພາບແຂ້ວ ໃຫ້ແກ່ເດັກນັກຮຽນປະຖົມ</u>

ທີມງານຈາກ USA, ໄດ້ສົມທົບກັບພະນັກງານສາທາເມືອງ ລົງກວດເດັກນ້ອຍ ຢູ່ 2 ໂຮງຮຽນປະຖົມຂອງເມືອງປາກແບງ ( 1 ໂຮງຮຽນຊົນເຜົ່າປະສົມ ແລະ 1 ໂຮງຮຽນເຜົ່າຂະມຸ) ໄດ້ບໍລິການ:

- ກວດສາຍຕາ
- ກວດແຂ້ວ
- ໃຫ້ສຸຂະສຶກສາການຮັກສາອະນາໄມແຂ້ວ
- ສິດສອນວິທີຖູແຂ້ວ ພ້ອມບໍລິຈາກ ໄມ້ຖູແຂ້ວ ແລະ ຢາຖູແຂ້ວ ໃຫ້ແກ່ເດັກ.
- ຍ້ອມແຂ້ວໃຫ້ເດັກດ້ວຍ Fluoride ເພື່ອໃຫ້ແຂ້ວແຂງແຮງ.

## 7. ກິດຈະກຳຊ່ວຍພັດທະນາ ບຸກຄະລາກອນ ແລະ ເຄື່ອງມືອຸປະກອນການແພດ ທີ່ໂຮງໝໍເມືອງ

ພັດທະນາເຄື່ອງມືອຸປະກອນການແພດ ໂດຍການສະໜອງເຄື່ອງມືອຸປະກອນການແພດທີ່ຈຳເປັນ ແລະ ສຳຄັນ ຕາມຄວາມຕ້ອງການ ໃຫ້ແກ່ໂຮງໝໍເມືອງຣຸນ ແລະ ເມືອງປາກແບງ ພ້ອມກັບ ສິດສອນກັບທີ່ ໃຫ້ແກ່ພະນັກງານແພດຂັ້ນເມືອງ ໃນການກວດ ແລະ ປິ່ນປົວ ພະຍາດ ແລະ ການນຳໃຊ້ເຄື່ອງມືອຸປະກອນການແພດບາງຢ່າງ ເພື່ອຊ່ວຍຍົກລະດັບການບໍລິການ ໃນໂຮງໝໍ ໃຫ້ດີຂື້ນ.

# ພາກທີ່ III
# ຜົນສຳເລັດຂອງການຈັດຕັ້ງປະຕິບັດ

ໄດ້ຮັບບໍລິການກວດ ແລະ ປິ່ນປົວ ຄົນເຈັບທັງໝົດຈຳນວນ 2,259 ຄົນ (ຍິງ1,186 ຫຼື ກວມ 52.5%) ທີ່ບໍ່ໄດ້ເສຍຄ່າບໍລິການ, ໂດຍບໍ່ຈຳແນກເພດ, ອາຍຸ, ຊົນເຜົ່າ ຫຼື ສາດສະໜາ, ໃນນັ້ນປະກອບມີ:

| ລ/ດ | ບໍລິການ | ມ.ຊຸນ | ມ.ປາກແບງ | ລວມ |
|---|---|---|---|---|
| 1 | ໄດ້ກວດ ແລະ ປິ່ນປົວ ຫູ-ດັງ-ຄໍ | 224 | 145 | 369 |
| 2 | ໄດ້ກວດ ແລະ ປິ່ນປົວ ແຂ້ວ | 305 | 189 | 494 |
| 3 | ໄດ້ກວດ ແລະ ປິ່ນປົວຕາ | 283 | 182 | 465 |
| 4 | ໄດ້ກວດ ແລະ ປິ່ນປົວເດັກນ້ອຍ | 201 | 206 | 407 |
| 5 | ໄດ້ກວດແມ່ມານ | 71 | 34 | 105 |
| 6 | ໄດ້ກວດ Echo ທົ່ວໄປຜູ້ໃຫຍ່ | 14 | 12 | 26 |
| 7 | ກວດເດັກໃນໂຮງຮຽນປະຖົມ | 0 | 393 | 393 |
| | ລວມທັງໝົດ: | **988** | **1,161** | **2,259** |

### 1. <u>ຜົນການບໍລິການກວດ ແລະ ປິ່ນປົວ ຫູ-ດັງ-ຄໍ:</u>

ຈຳນວນ 369 ຄົນ (ຍິງ 183), ທີ່ໄດ້ຮັບການກວດ ແລະ ປິ່ນປົວ ປະກອບມີ:

- Otitis media (Chronic) 121
- Otitis media (Serum) 72
- Neuro sensorial hearing loss: 32
- Rhinitis: 24
- Tonsillitis/ Pharyngitis: 19
- Otitis media (Acute) 18
- Polyps 11
- Otitis external: 09
- Other: 63

### 2. <u>ຜົນການບໍລິການກວດ ແລະ ປິ່ນປົວແຂ້ວ:</u>

ຈຳນວນ 494 ຄົນ (ຍິງ 257), ທີ່ໄດ້ຮັບການກວດ ແລະ ປິ່ນປົວ ປະກອບມີ:

- Cavitas dentitis with extraction: 214 ກໍລະນີ
- Repair teeth: 199 ກໍລະນີ
- Calciferous cleaning: 81 ກໍລະນີ.

3. <u>ການບໍລິການກວດ ແລະ ປິ່ນປົວຕາ:</u>

ຈຳນວນ 465 ຄົນ (ຍິງ 219), ໄດ້ຮັບການກວດ ແລະ ປິ່ນປົວ, ໃນນັ້ນໄດ້ຜ່າຕັດ ທັງໝົດ 94 ກໍລະນີ ໃນນັ້ນປະກອບມີ:

- ຜ່າຕັດແກ່ນຕາຂຸ້ນ (cataract): 76 ກໍລະນີ
- ຜ່າຕັດອື່ນໆ (Peterygium, eyelid surgery): 21 ກໍລະນີ

ພ້ອມໄດ້ໃຫ້ການບໍລິການແທກແວ່ນຕາ 130 ກໍລະນີ ແລະ ແຈກແວ່ນຕາ ຈຳນວນ: 33 ຄູ່.

4. <u>ການບໍລິການກວດແມ່ມານ</u>

ຈຳນວນແມ່ມານ 105 ຄົນ ແມ່ນໄດ້ຮັບການດ້ວຍເຄື່ອງ Ultrasound Echography ຢູ່ 2 ໂຮງໝໍເມືອງ (ຮຸນ ແລະ ເມືອງປາກແບງ), ພົບເຫັນຜູ້ຍິງຖືພາຜິດປົກກະຕິ ຈຳນວນ 5 ຄົນ (ກວມ 4.8%), ໃນນັ້ນມີ:

| | |
|---|---|
| – Twin: | 3 |
| – Anencephaly: | 1 |
| – Placenta praevia: | 1 |

ໃນກຸ່ມຜູ້ຍິງຖືພາທີ່ຜິດປົກກະຕິນີ້ ໄດ້ຮັບການແນະນຳກ່ຽວກັບບັນຫາ ແລະ ການຕິດຕາມ ເກີດລູກຢູ່ທີ່ໂຮງໝໍເມືອງ ຫຼື ໂຮງໝໍແຂວງ.

5. <u>ການບໍລິການກວດ ແລະ ປິ່ນປົວເດັກນ້ອຍ:</u>

ຈຳນວນເດັກນ້ອຍ 407 ຄົນ (ຍິງ 231), ທີ່ໄດ້ຮັບການກວດ ແລະ ປິ່ນປົວ ໃນນັ້ນປະກອບມີ:

| | |
|---|---|
| – Diarrhea: | 95 |
| – Pharyngitis+Tonsilitis: | 83 |
| – Cold fever: | 78 |
| – Parasites: | 76 |
| – Pneumonia: | 37 |
| – Skin infection: | 27 |
| – Anemia (Thalasemia): | 04 |
| – Malnutrition: | 03 |
| – Down Syndrome: | 02 |
| – Cerebral Palsy: | 02 |

6. <u>ການລົງເຄື່ອນໄຫວຢູ່ໂຮງຮຽນປະຖົມ</u>

ຈຳນວນນັກຮຽນປະຖົມ 393 ຄົນ (ຍິງ 182) ໄດ້ຮັບການກວດ ຢູ່ທີ່ 2 ໂຮງຮຽນປະຖົມ ທີ່ເມືອງປາກແບງ (1 ໂຮງຮຽນຊົນເຜົ່າປະສົມ ແລະ 1 ໂຮງຮຽນຊົນເຜົ່າຂະມຸ), ພົບວ່າ:

- ເດັກນັກຮຽນປະຖົມທັງໝົດ ມີສາຍຕາດີປົກກະຕິ 100%
- ສະເພາະພະຍາດແຂ້ວແມງຂອງເດັກ ເຫັນໄດ້ວ່າ ຢູ່ໂຮງຮຽນແຫ່ງທີ່ 1 (ນັກຮຽນຊົນເຜົ່າປະສົມ) ແມ່ນມີເດັກເປັນແຂ້ວແມງກວດ ຫຼາຍກວ່າ 65%.
- ເດັກທັງໝົດ ໄດ້ຮັບການຍ້ອມ Fluoride ເພື່ອເຮັດໃຫ້ແຂ້ວແຂງແຮງດີ.

## 7. <u>ກິດຈະກຳຊ່ວຍພັດທະນາໂຮງໝໍຂັ້ນເມືອງ</u>

1. ທາງມູນນິທິ LRF ໄດ້ບໍລິຈາກ ເຄື່ອງມືອຸປະກອນການແພດ ທີ່ສຳຄັນ ເພື່ອຍົກລະດັບການບໍລິການຢູ່ຂັ້ນໂຮງໝໍເມືອງໃຫ້ດີຂື້ນ ປະກອບມີ: ເຄື່ອງ Ultrasound Egography, Auto Sphygmomanometer, Fetal heart detector, Dental extraction set, Laryngoscope, Oxymeter ແລະ ເຄື່ອງມືອຸປະກອນການແພດຈຳນວນໜຶ່ງ ຕາມຄວາມຕ້ອງການ ໃຫ້ແກ່ໂຮງໝໍເມືອງຮຸນ ແລະ ເມືອງປາກແບງ.

2. ໄດ້ສິດສອນພາກປະຕິບັດຕົວຈິງ ໃຫ້ແກ່ພະນັກງານທ້ອງຖິ່ນຂັ້ນເມືອງ ຄື:
   - ການນຳໃຊ້ເຄື່ອງມື Ultrasound Echography ໃຫ້ແກ່ທ່ານໝໍທີ່ໂຮງໝໍເມືອງຮຸນ ແລະ ເມືອງປາກແບງ.
   - ການນຳໃຊ້ ແລະ ການດູແລຮັກສາເຄື່ອງມືອຸປະກອນທີ່ໄດ້ຮັບບໍລິຈາກໂດຍມູນນິທິ LRF ປະກອບມີ: ເຄື່ອງກວດແມ່ມານ, ເດັກນ້ອຍ, ເຄື່ອງມື Ultrasound echography, auto shphynmomanometer ແລະ ເຄື່ອງການແພດບາງຢ່າງ ຢູ່ທີ່ໂຮງໝໍເມືອງປາກແບງ.

# ພາກທີ່ IV

# ງົບປະມານ-ລາຍຈ່າຍ

ງົບປະມານ ແລະ ລາຍຈ່າຍຕົວຈິງ: ***33,385 USD*** (ສາມສິບສາມພັນສາມຮ້ອຍແປດສິບຫ້າໂດລາ ສະຫະລັດ), ປະກອບມີ:

- ເຄື່ອງມືອຸປະກອນການແພດ ນຳເຂົ້າຈາກ USA $12,650
- ຄ່າຂົນສົ່ງເຄື່ອງມືອຸປະກອນ ແລະ ຢາ $1,000
- ຢາປິ່ນປົວ ແລະ ອຸປະກອນ $7,895
- ຄ່າເດີນທາງ ແລະ ກິນຢູ່ພັກເຊົາຂອງທີມງານ USA $3,090
- ຄ່າແຮງງານ ແລະ ກິນຢູ່ພັກເຊົາຂອງທີມລາວ $1,782
- ການກະກຽມກິດຈະກຳ $279
- ຄ່າເຊົ່າລົດ ແລະ ນ້ຳມັນ $1,260
- ສະໜອງຢາສີແຂ້ວ, ແປງຖູແຂ້ວ ແລະ ອຸປະກອນການຮຽນ ໃຫ້ແກ່ເດັກນັກຮຽນປະຖົມ $715
- ຄ່າບໍລິການກວດ ແລະ ປິ່ນປົວຕາ $4,714

**<u>ໝາຍເຫດ:</u>** ຢາ, ອຸປະກອນເຄື່ອງມື ແລະ ຄ່າໃຊ້ຈ່າຍ ສະເພາະກວດ ແລະ ປິ່ນປົວຕາ ແມ່ນຄວາມຮັບຜິດຊອບຂອງ ມູນນິທິ Fred Hollows.

ບາງຢາ ແລະ ບາງເຄື່ອງມືປິ່ນປົວຕາ ຍັງໄດ້ຮັບການສະໜອງຈາກມູນນິທິຟື້ນຟູສຸຂະພາບລາວ.

(ລາຍລະອຽດເອກະສານຂັດທ້າຍ)

# ພາກທີ່ V

# ຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ແນວທາງແກ້ໄຂ

## 1. ຈຸດດີ

- ໄດ້ຮັບການຮ່ວມມືເປັນຢ່າງດີ ຈາກພາກລັດຂັ້ນແຂວງ ໂດຍສະເພາະແມ່ນພະແນກສາທາລະນະສຸກແຂວງ ແລະ ໂຮງໝໍແຂວງອຸດົມໄຊ ທີ່ໄດ້ໃຫ້ຂໍ້ສະດວກ ແລະ ສະໜອງວິຊາການ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳ.
- ທາງມູນນິທິ LRF ໄດ້ສະໜອງເຄື່ອງມືທີ່ສຳຄັນໃຫ້ແກ່ ໂຮງໝໍເມືອງປາກແບງ ໂດຍສະເພາະແມ່ນເຄື່ອງມື Ultrasound Echography ພ້ອມຝຶກອົບຮົມກັບທີ່ໃຫ້ແກ່ພະນັກງານທ້ອງຖິ່ນ ໃນການກວດ.
- ໄດ້ຊ່ວຍໃຫ້ປະຊາຊົນຜູ້ທຸກຍາກ ຢູ່ບ່ອນຫ່າງໄກສອກຫຼີກ ຫຼື ຜູ້ບໍ່ມີເງືອນໄຂ ໄດ້ຮັບການປິ່ນປົວ.
- ໄດ້ຊ່ວຍເຮັດໃຫ້ຈຳນວນອັດຕາຂອງຄົນຫູໜວກ, ແຂ້ວແມງ, ຕາບອດ ຫຼຸດລົງເທື່ອລະກ້າວ ພ້ອມກັບຊ່ວຍຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກ ໃນແຂວງອຸດົມໄຊ.
- ຊ່ວຍສົ່ງເສີມຮັກສາສຸຂະພາບແຂ້ວ ໃຫ້ແກ່ເດັກນ້ອຍນັກຮຽນປະຖົມ ທີ່ເມືອງປາກແບງ ແຂວງອຸດົມໄຊ.

## 2. ບັນຫາ ແລະ ຂໍ້ຄົງຄ້າງ

- ຜູ້ປະສານງານຝ່າຍລາວ ຈາກອຸດົມໄຊ ບໍ່ມີເວລາພຽງພໍ ໃນການກະກຽມກິດຈະກຳໃນຄັ້ງນີ້.
- ທ່ານໝໍ ທູ-ດັງ-ຄຳ ຈາກ ໂຮງໝໍແຂວງອຸດົມໄຊ ບໍ່ສາມາດເຂົ້າຮ່ວມກິດຈະກຳຄັ້ງນີ້ໄດ້.
- ຈຳນວນຄົນເຈັບທີ່ເຂົ້າຮັບບໍລິການໄດ້ 94% ຂອງຄາດໝາຍ.
- ຢູ່ທີ່ເມືອງປາກແບງ ໄດ້ມີ International Clinic ທີ່ມີອາສາສະໝັກຈາກຕ່າງປະເທດ ຄອຍໃຫ້ບໍລິການ ຢູ່ໃນຂົງເຂດນີ້, ເປັນເງືອນໄຂ ທີ່ອຳນວຍຄວາມສະດວກໃຫ້ແກ່ຄວາມຕ້ອງການຂອງຂອງຄົນເຈັບໃນຂົງເຂດນັ້ນ ບໍ່ມີຄວາມຈຳເປັນຕ້ອງການ ການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນອື່ນ.

## 3. ວິທີແກ້ໄຂ

- ຄັດເລືອກເອົາຂົງເຂດທີ່ມີຄວາມຈຳເປັນ ແລະ ມີຄວາມຈຳກັດທາງດ້ານການບໍລິການສາທາລະນະສຸກ.
- ເພີ່ມເວລາຂອງການບໍລິການ
- ຜູ້ປະສານງານຢູ່ອຸດົມໄຊ ຄວນຈັດແບ່ງເພີ່ມເຕີມ ໃນການກະກຽມຈັດກິດຈະກຳໃນຄັ້ງຕໍ່ໄປ.

# ພາກທີ່ VI:

# ແຜນກິດຈະກຳໃນຄັ້ງຕໍ່ໄປ

(ໂດຍຜ່ານການພິຈາລະນາ)

**ແຜນກິດຈະກຳ**

1. ຜ່າຕັດພະຍາດຄໍໜຽງ, ສົບແວ່ງ, ເພດານໂວ່ ແລະ ຜ່າຕັດພະຍາດຄໍ.
2. ຜ່າຕັດພະຍາດແກ່ນຕາຂຸ້ນໃສ່ແກ່ນຕາທຽມ ພ້ອມກັບຜ່າຕັດພະຍາດທີ່ເປັນສາຍເຫດພາໃຫ້ຕາບອດ (ຊີ້ນຕາປີ່ງ, ໜັງຕາ ແລະ ອື່ນໆ ) ພ້ອມຟື້ນຟູສາຍຕາໃຫ້ດີຂື້ນໂດຍການໃສ່ແວ່ນຕາ.
3. ກວດ ແລະ ປິ່ນປົວ ພະຍາດ ຫູ-ດັງ-ຄໍ.
4. ກວດ ແລະ ປິ່ນປົວພະຍາດແຂ້ວ
5. ກວດແມ່ມານດ້ວຍເຄື່ອງມື Ultrasound
6. ກວດ ແລະ ປິ່ນປົວ ພະຍາດອັກເສບໃນເດັກ.
7. ສະໜັບສະໜູນ ສົ່ງເສີມພັດທະນາຄວາມສາມາດໃຫ້ແກ່ທ່ານໝໍລາວ ແລະ ພະນັກງານຂັ້ນເມືອງ ໃຫ້ມີຄວາມສຳນານງານ, ພ້ອມກັບສະໜັບສະໜູນເຄື່ອງມືອຸປະກອນການແພດ ແລະ ຢາ ທີ່ຈຳເປັນ ໃຫ້ແກ່ໂຮງໝໍຂັ້ນເມືອງ.
8. ກວດສຸຂະພາບໃຫ້ແກ່ເດັກໃນໂຮງຮຽນປະຖົມ, ກວດຕາ, ຫູ ແລະ ແຂ້ວ.
9. ສະໜອງທືນນໍ້າສະອາດໃຫ້ແກ່ບ້ານ ທີ່ຖືກຄັດເລືອກ.

**ສະຖານທີ່:** 1. ທີ່ໂຮງໝໍແຂວງອຸດົມໄຊ

2. ທີ່ເມືອງໃໝ່ ແຂວງຜົ້ງສາລີ

3. ທີ່ເມືອງບຸນໃຕ້ ແຂວງຜົ້ງສາລີ

**ໄລຍະເວລາ:** ເດືອນມິຖຸນາ 2013 ແລະ ຕຸລາ 2013.

ປະທານມູນນິທິຟື້ນຟູສຸຂະພາບລາວ

LAO REHABILITATION FOUNDATION, INC. CALIFORNIA, USA — LRF

Dr. Luc Janssens

ຜູ້ລາຍງານ

ດຣ. ເພັດສະໝອນ ອິນດາລາ

Phetsamone INDARA, MD.

ຜູ້ປະສານງານມູນນິທິ ຟື້ນຟູສຸຂະພາບລາວ

ຫົວໜ້າໜ່ວຍງານຕາ ໂຮງໝໍແຂວງອຸດົມໄຊ

ຫົວໜ້າອຳນວຍການໂຮງໝໍແຂວງອຸດົໄຊ

ດຣ. ກົ່ງເພັດ ໄຊຍະລາດ

ຫົວໜ້າພະແນກສາທາລະນະສຸກແຂວງອຸດົມໄຊ

ພະແນກ ສາທາລະນະສຸກ ແຂວງອຸດົມໄຊ

ດຣ. ຄຳພັນ ໄຊຍະວົງ

Dr Khamphan XAYAVONG

# ພາກທີ່ VII

# ເອກະສານຊັດທ້າຍ

1. ຮູບພາບກິດຈະກໍາ
2. ທີມງານ
3. ລາຍລະອຽດການໃຊ້ຈ່າຍງົບປະມານຂອງໂຄງການ
4. ລາຍການເຄື່ອງມືອຸປະກອນການແພດ ທີ່ບໍລິຈາກໃຫ້ 3 ໂຮງໝໍເມືອງ
5. ໃບຢັ້ງຢືນ ແລະ ໃບຍ້ອງຍໍ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ.
6. ເອກະສານຂໍ້ສະເໜີ ແລະ ມະຕິຕົກລົງ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ

(ເອກະສານຊັດທ້າຍທັງໝົດ ແມ່ນຕິດຊັດທ້າຍສະບັບພາສາອັງກິດ)